ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

*****************

ກະຊວງອຸດສາຫະກຳ ແລະ ການຄ້າ ເລກທີ **0995** /ອຄ

ນະຄອນຫລວງວຽງຈັນ,ວັນທີ 19 ມິຖຸນາ 2008

# ຄຳແນະນຳ

## ຂອງລັດຖະມົນຕີວ່າການ ກະຊວງອຸດສາຫະກຳ ແລະ ການຄ້າ ກ່ຽວກັບການແຈ້ງຂຶ້ນທະບຽນວິສາຫະກິດຕາມກົດໝາຍວ່າດ້ວຍວິສາຫະກິດ

**ເຖິງ : - ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ ແລະ ນະຄອນຫລວງ ;**

**- ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ ;**

**- ບັນດາຫົວໜ່ວຍທຸລະກິດ ແລະ ຜູ້ທີ່ມີຈຸດປະສົງຢາກສ້າງຕັ້ງວິສາຫະກິດ ຢູ່ ສ ປ ປ ລາວ.**

**ເລື່ອງ : ຈັດຕັ້ງປະຕິບັດ ການແຈ້ງຂຶ້ນທະບຽນວິສາຫະກິດ ຕາມກົດໝາຍວ່າດ້ວຍວິສາຫະກິດ ຜ່ານລະບົບປະຕູດຽວ.**

- ອີງຕາມກົດໝາຍວ່າດ້ວຍວິສາຫະກິດ, ສະບັບເລກທີ 11/ສພຊ, ລົງວັນທີ 9 ພະຈິກ 2005 ;
- ອີງຕາມດຳລັດ, ສະບັບເລກທີ 188/ນຍ, ລົງວັນທີ 17 ສິງຫາ 2006, ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ກະຊວງອຸດສາຫະກຳ ແລະ ການຄ້າ .

ເພື່ອຈັດຕັ້ງປະຕິບັດ ກົດໝາຍວ່າດ້ວຍວິສາຫະກິດ ແລະ ບັນດານິຕິກຳທີ່ກ່ຽວຂ້ອງກັບການແຈ້ງຂຶ້ນທະບຽນວິສາຫະກິດ ແນໃສ່ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດ ການບໍລິການແຈ້ງຂຶ້ນທະບຽນວິສາຫະກິດ ເປັນລະບົບຜ່ານປະຕູດຽວ, ໃຫ້ມີຄວາມສະດວກ, ວ່ອງໄວ, ໂປ່ງໃສ, ເຂົ້າໃຈງ່າຍ ໃຫ້ແກ່ການສ້າງຕັ້ງວິສາຫະກິດ ແລະ ການດັດແກ້ທະບຽນວິສາຫະກິດ ສຳລັບຫົວໜ່ວຍວິສາຫະກິດ ທີ່ໄດ້ຂຶ້ນທະບຽນວິສາຫະກິດຕາມກົດໝາຍວ່າດ້ວຍທຸລະກິດໃຫ້ໄດ້ ເຄື່ອນໄຫວດຳເນີນທຸລະກິດຢ່າງເຕັມສ່ວນ ແລະ ເຮັດໃຫ້ການຈັດຕັ້ງປະຕິບັດລະບຽບກົດໝາຍໃນການສົ່ງເສີມ, ຕິດຕາມ,ພັດທະນາ ແລະ ກະຕຸກຊຸກຍູ້ ໃຫ້ບັນດາຫົວໜ່ວຍວິສາຫະກິດໄດ້ມີການຂະຫຍາຍຕົວ ເປັນພື້ນຖານໃຫ້ແກ່ການພັດທະນາເສດຖະກິດຂອງຊາດຢ່າງຕໍ່ເນື່ອງ.

**ລັດຖະມົນຕີວ່າການກະຊວງອຸດສາຫະກຳແລະການຄ້າ ອອກຄຳແນະນຳ ດັ່ງນີ້ :**

## I./ ການຈັດຕັ້ງປະຕິບັດການແຈ້ງຂຶ້ນທະບຽນວິສາຫະກິດ ດ້ວຍລະບົບປະຕູດຽວ

ເພື່ອຈັດຕັ້ງຜັນຂະຫຍາຍເນື້ອໃນຈິດໃຈຂອງຄຳສັ່ງເລກທີ 37/ນຍ,ລົງວັນທີ24 ຕຸລາ 2006 ກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍວິສາຫະກິດ ແລະ ຂໍ້ຕົກລົງເລກທີ 86/ນຍ,ລົງວັນທີ 03/08/2007 ກ່ຽວກັບການຈັດຕັ້ງປະຕິບັດກົນໄກ "ການບໍລິການຜ່ານປະຕູດຽວ" ຢູ່ອົງການບໍລິຫານລັດ .

ການສ້າງຕັ້ງກົນໄກການບໍລິການແຈ້ງຂຶ້ນທະບຽນວິສາຫະກິດ ຜ່ານລະບົບປະຕູດຽວໃນໄລຍະເບື້ອງຕົ້ນ ຂະແໜງອຸດສາຫະກຳແລະການຄ້າ ໄດ້ສ້າງຕັ້ງ ຫ້ອງການເຈົ້າໜ້າທີ່ທະບຽນວິສາຫະກິດ "ຫຈທ" ຂຶ້ນຢູ່ໃນຂອບເຂດທົ່ວປະເທດ,ສ້າງແບບຟອມເປັນແຕ່ລະຮູບການ, ຮູບແບບຂອງວິສາຫະກິດ, ກຳນົດຂັ້ນຕອນ, ເວລາ ແລະ ຄ່າທຳນຽມການແຈ້ງຂຶ້ນທະບຽນວິສາຫະກິດ,ແນໃສ່ເຮັດໃຫ້ການຈັດຕັ້ງປະຕິບັດ ການຂຶ້ນທະບຽນວິສາຫະກິດ ສອດຄ່ອງຕາມກົດໝາຍວ່າດ້ວຍວິສາຫະກິດ ເປັນເອກະພາບໃນຂອບເຂດ ທົ່ວປະເທດ, ສ້າງເປັນລະບົບຖານຂໍ້ມູນແຫ່ງຊາດ (National Database) ກ່ຽວກັບທະບຽນວິສາຫະກິດແລະໃຫ້ສາມາດເຊື່ອມຕໍ່ ກັບທຸກຂະແໜງການທີ່ກ່ຽວຂ້ອງ.

### 1.1./ ກົງຈັກການຈັດຕັ້ງ ຄຸ້ມຄອງ ການບໍລິການແຈ້ງຂຶ້ນທະບຽນວິສາຫະກິດ ຜ່ານປະຕູດຽວ

ຂະແໜງອຸດສາຫະກຳ ແລະ ການຄ້າ ແບ່ງຂັ້ນຄຸ້ມຄອງການບໍລິການແຈ້ງຂຶ້ນທະບຽນວິສາຫະກິດຜ່ານລະບົບປະຕູດຽວ ຊຶ່ງມີສາຍຕັ້ງແຕ່ສູນກາງລົງຮອດທ້ອງຖິ່ນ ຊຶ່ງປະກອບດ້ວຍ :

- ຂັ້ນສູນກາງ: ຫ້ອງການເຈົ້າໜ້າທີ່ທະບຽນວິສາຫະກິດ"ຫຈທ"ນະຄອນຫລວງວຽງຈັນ, ຕັ້ງຢູ່ກະຊວງອຸດສາຫະກຳແລະການຄ້າ(ກົມການຄ້າພາຍໃນ),ຊຶ່ງລວມທັງເຈົ້າໜ້າທີ່ທະບຽນວິສາຫະກິດຂອງຂັ້ນພະແນກອຸດສາຫະກຳແລະການຄ້ານະຄອນຫລວງວຽງຈັນ.

- ຂັ້ນທ້ອງຖິ່ນ : ຫ້ອງການເຈົ້າໜ້າທີ່ທະບຽນວິສາຫະກິດ "ຫຈທ" ຂັ້ນແຂວງ,ຕັ້ງຢູ່ ພະແນກອຸດສາຫະກຳແລະການຄ້າແຂວງ ໃນຂອບເຂດທົ່ວປະເທດ.

ສຳລັບຂັ້ນຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ ຫຼື ເທດສະບານ ຕ້ອງປະສານງານກັບ"ຫຈທ" ໂດຍກົງ ແລະ ຈະມີເຈົ້າໜ້າທີ່ຂອງ "ຫຈທ" ໄປປະຈຳຢູ່ຕາມເງື່ອນໄຂຕົວຈິງ.

### 1.2. ການສ້າງຕັ້ງວິສາຫະກິດ

ຜູ້ທີ່ມີຈຸດປະສົງຢາກສ້າງຕັ້ງວິສາຫະກິດ ກ່ອນຈະຍື່ນຄຳຮ້ອງແຈ້ງຂຶ້ນທະບຽນວິສາຫະກິດນຳ"ຫຈທ" ແຕ່ລະຂັ້ນຕ້ອງກະກຽມເງື່ອນໄຂພື້ນຖານ ດັ່ງນີ້ :

ກ. ການລົງທຶນຂອງລັດ100% ຫຼື ລັດປະສົມກັບພາກສ່ວນອື່ນ ໃຫ້ປະຕິບັດຕາມ ພາກທີ VI ແລະ ພາກທີ VII ຂອງກົດໝາຍວ່າດ້ວຍວິສາຫະກິດ, ສ່ວນຂັ້ນຕອນອື່ນໆໃນການສ້າງຕັ້ງ ແລະ ສົ່ງເສີມຕິດຕາມ ໃຫ້ປະຕິບັດຕາມລະບຽບການຂອງຂະແໜງການເງິນກຳນົດໄວ້.

ຂ. ທຸກໆການລົງທຶນຂອງຕ່າງປະເທດ ຫຼື ຮ່ວມທຶນກັບພາກສ່ວນອື່ນ ຕ້ອງໄດ້ຜ່ານຂະແໜງແຜນການ ແລະ ການລົງທຶນ ເພື່ອຂໍອະນຸຍາດລົງທຶນ,ຖ້າໄດ້ຮັບໃບອະນຸຍາດ ລົງທຶນ ຂະແໜງອຸດສາຫະກຳ ແລະ ການຄ້າ ຈິ່ງຂຶ້ນທະບຽນວິສາຫະກິດໃຫ້ຕາມລະບຽບການ.

ຄ. ຜູ້ລົງທຶນເອກະຊົນພາຍໃນ ທີ່ມີຈຸດປະສົງສ້າງຕັ້ງວິສາຫະກິດ ໂດຍບຸກຄົນ ຫຼື ນິຕິບຸກຄົນ ທີ່ເປັນວິສາຫະກິດສ່ວນບຸກຄົນ,ວິສາຫະກິດຮຸ້ນສ່ວນຫຼືບໍລິສັດ ໃຫ້ປະກອບເອກະສານແຈ້ງຂຶ້ນທະບຽນວິສາຫະກິດຕາມກົດໝາຍວ່າດ້ວຍວິສາຫະກິດ.

ສຳລັບການສ້າງຕັ້ງວິສາຫະກິດລວມໝູ່, ຜູ້ຄ້າຂາຍນ້ອຍ, ຈຳໜ່າຍ ຫຼື ຄ້າເປັນແຕ່ລະປີ, ຄ້າຂາຍຕາມລະດູການ(ບໍ່ປົກກະຕິ) ລວມທັງທຸລະກິດການຄ້າ ການບໍລິການຂະໜາດນ້ອຍ ຫຼື ການຜະລິດປຸງແຕ່ງແບບປົກກະຕິ ຫຼື ແບບຫັດຖະກຳແບບຄອບຄົວຂະໜາດນ້ອຍ ແມ່ນບໍ່ຢູ່ໃນຂອບເຂດການນຳໃຊ້ກົດໝາຍວ່າດ້ວຍວິສາຫະກິດ ແລະ ຈະມີລະບຽບການປະກາດໃຊ້ຕ່າງຫາກ.

ຖ້າມີການເຄື່ອນໄຫວດຳເນີນທຸລະກິດ ຕ້ອງໄດ້ປະຕິບັດພັນທະ ຕາມລະບຽບການຂອງຂະແໜງການເງິນ.

## 1.3 ແບບຟອມເປັນເອກະພາບໃນການແຈ້ງຂຶ້ນທະບຽນວິສາຫະກິດ

ເພື່ອເຮັດໃຫ້ການປະກອບເອກະສານແຈ້ງຂຶ້ນທະບຽນວິສາຫະກິດ ມີຄວາມສະດວກ,ງ່າຍດາຍ,ເຂົ້າໃຈງ່າຍ ຈິ່ງໄດ້ກຳນົດການນຳໃຊ້ແບບຟອມເປັນເອກະພາບໃນຂອບເຂດທົ່ວປະເທດ ເຊັ່ນ : ໃບສະເໜີຈອງຊື່ວິສາຫະກິດ, ຄຳຮ້ອງແຈ້ງຂຶ້ນທະບຽນວິສາຫະກິດ, ສັນຍາສ້າງຕັ້ງວິສາຫະກິດ ຫຼື ບໍລິສັດ ແລະ ກົດລະບຽບຂອງວິສາຫະກິດ ຫຼື ບໍລິສັດ ເປັນແຕ່ລະຮູບການແລະຮູບແບບໃນການສ້າງຕັ້ງວິສາຫະກິດ (ລະອຽດໄດ້ກຳນົດໄວ້ ໃນແຈ້ງການ ສະບັບເລກທີ 1989/ອຄ, ລົງວັນທີ 2 ພະຈິກ 2007).

ຖ້າການປະກອບເອກະສານຖືກຕ້ອງຄົບຖ້ວນ ເຈົ້າໜ້າທີ່ທະບຽນວິສາຫະກິດ ຈິ່ງຮັບເອກະສານການແຈ້ງຂຶ້ນທະບຽນວິສາຫະກິດ ນັບແຕ່ມື້ນັ້ນເປັນຕົ້ນໄປ.

### ກ. ການພິວພັນເອົາແບບຟອມ

ບຸກຄົນ ຫຼື ນິຕິບຸກຄົນ ທີ່ມີຈຸດປະສົງຢາກແຈ້ງຂຶ້ນທະບຽນວິສາຫະກິດ ໃຫ້ພົວພັນເອົາແບບຟອມນຳບັນດາ ຫ້ອງການເຈົ້າໜ້າທີ່ທະບຽນວິສາຫະກິດ "ຫຈທ" ໃນຂອບເຂດທົ່ວປະເທດ, ຊຶ່ງສາມາດພົວພັນເອົາດ້ວຍວິທີດັ່ງນີ້ :

- ຊຸດຮ່າງແບບຟອມເປັນເຈ້ຍ ມີກາແດງ ຂອງ "ຫຈທ" ປະທັບໃສ່ແຕ່ລະໃບ.
- ຊຸດແບບຟອມອັດເປັນແຜ່ນຊີດີ (CD).
- ເຂົ້າຫາເວບໄຊ້ຂອງ ກະຊວງອຸດສາຫະກຳ ແລະ ການຄ້າ : www.moic.gov.la ເພື່ອໂຫລດເອົາຮ່າງແບບຟອມ.
- ຫຼື ພົວພັນກັບ "ຫຈທ" ຕາມທີ່ຢູ່ e-mail : ero@moic.gov.la ; ໂທລ :021 412011.

ບັນດາແບບຟອມສາມາດ ຊື້ ແລະ ຍື່ນ ນຳ "ຫຈທ" ໄດ້ທຸກຂັ້ນ, ຖ້າແບບຟອມໃດບໍ່ມີກາປະທັບ ແລະ ໃບບິນຮັບເງິນ ຂອງ "ຫຈທ" ຂັ້ນໃດໜຶ່ງ, ໃຫ້"ຫຈທ" ເກັບຄ່າແບບຟອມ ແລະ ໃຫ້ປະທັບກາແດງໃນເວລາຮັບແຈ້ງຂຶ້ນທະບຽນວິສາຫະກິດ ຫຼື ຂຶ້ນທະບຽນວິສາຫະກິດແລ້ວ ໃຫ້ເກັບຄ່າແບບຟອມຄືນ ໃນສ່ວນທີ່ຍັງບໍ່ທັນໄດ້ເກັບ.

### ຂ. ການຕື່ມເນື້ອໃນໃສ່ຮ່າງແບບຟອມ

ການຕື່ມເນື້ອໃນໃສ່ຮ່າງແບບຟອມຕ້ອງເປັນພາລາວ, ຊຶ່ງສາມາດປະຕິບັດໄດ້ ດ້ວຍ 3ວິທີ ຄື :ການຂຽນດ້ວຍມື ;ດ້ວຍພິມດີດ ຫຼື ການພິມດ້ວຍຄອມພິວເຕີ (Font:SaysetthaLao;Size:12,ນຳໃຊ້ເຈ້ຍ:A4).

### ຄ. ລາຄາຊຸດແບບຟອມ

**ບັນດາຊຸດແບບຟອມ ໄດ້ກຳນົດລາຄາລະອຽດດັ່ງນີ້:**

+ **ວິສາຫະກິດສ່ວນບຸກຄົນ ລວມລາຄາ 40.000.ກີບ/ຊຸດ ໃນນີ້:**

1. ໃບຄຳຮ້ອງແຈ້ງຂຶ້ນທະບຽນລວມທັງໃບສະເໜີຈອງຊື່ 10.000.ກີບ.
2. ຄ່າພິມໃບທະບຽນວິສາຫະກິດ : 30.000.ກີບ(ເກັບໃນເວລາມອບໃບທະບຽນວິສາຫະກິດ).

**+ <u>ສຳລັບວິສາຫະກິດຮຸ້ນສ່ວນ ແລະ ບໍລິສັດ ລວມລາຄາ 90.000.ກີບ/ຊຸດ ໃນນີ້:</u>**

1. ໃບສະເໜີຈອງຊື່ 10.000.ກີບ
2. ສັນຍາສ້າງຕັ້ງ 10.000.ກີບ
3. ໃບຄຳຮ້ອງແຈ້ງຂຶ້ນທະບຽນ 10.000.ກີບ
4. ກົດລະບຽບ 30.000.ກີບ
5. ຄ່າພິມໃບທະບຽນວິສາຫະກິດ 30.000.ກີບ(ເກັບໃນເວລາມອບໃບທະບຽນວິສາຫະກິດ).

## 1.4. <u>ການຈອງຊື່ວິສາຫະກິດ</u>

ບຸກຄົນ ຫຼື ນິຕິບຸກຄົນ ທີ່ມີຈຸດປະສົງຢາກສ້າງຕັ້ງວິສາຫະກິດ ຕ້ອງໄດ້ສະເໜີ ຈອງຊື່ ແລະ ໄດ້ໃບຮັບຮອງຊື່ວິສາຫະກິດ ກ່ອນຈິ່ງແຈ້ງຂຶ້ນທະບຽນວິສາຫະກິດ (ຕາມຂໍ້ກຳນົດ ວ່າດ້ວຍການຈອງ ແລະ ຮັບຮອງຊື່ວິສາຫະກິດ ສະບັບເລກທີ 0924/ອຄ, ລົງວັນທີ 4 ມິຖຸນາ 2008 ).

ຂັ້ນຕອນໃນການສະເໜີຂໍໃບອະນຸມັດຈອງຊື່ແລະໃບຮັບຮອງຊື່ ໃຫ້ປະຕິບັດດັ່ງນີ້:

1. "ທຈທ" ຂັ້ນແຂວງ ເມື່ອໄດ້ຮັບໃບສະເໜີຈອງຊື່ວິສາຫະກິດ,ຖ້າເອກະສານຄົບຖ້ວນໃຫ້ເຊັນຢັ້ງຢືນ ແລະ ປະທັບກາ ໃສ່ໃບສະເໜີ ແລ້ວສົ່ງໃຫ້ "ທຈທ" ຂັ້ນນະຄອນຫລວງ ພາຍໃນ 01ວັນລັດຖະການ ພ້ອມຈັດສົ່ງ ທາງ ແຟກ, ອິນເຕີເນັດ ຫຼື ວິທີອື່ນໆ.

2. "ທຈທ" ຂັ້ນນະຄອນຫລວງວຽງຈັນ ເມື່ອໄດ້ຮັບໃບສະເໜີແລ້ວ ຕ້ອງປະຕິບັດ ດັ່ງນີ້:

- ກວດສອບຊື່,ກຳນົດເລກລະຫັດ(Code) ແລະ ອອກໃບອະນຸມັດຈ່ອງຊື່ ຫຼື ຕອບປະຕິເສດການຈອງຊື່ ແລ້ວສົ່ງໃຫ້ "ທຈທ" ຂັ້ນແຂວງ ພາຍໃນ 02 ວັນລັດຖະການ.

- ອອກໃບຮັບຮອງຊື່ ຫຼື ໃບແຈ້ງຕອບປະຕິເສດການຈອງຊື່ ໃຫ້ ບຸກຄົນ ຫຼື ນິຕິບຸກຄົນ ທີ່ມາສະເໜີໂດຍກົງ ພາຍໃນ 02 ວັນລັດຖະການ.

3. "ທຈທ" ຂັ້ນແຂວງ ຖ້າໄດ້ໃບອະນຸມັດຫຼືໃບຕອບປະຕິເສດ ໃຫ້ອອກໃບຮັບຮອງຊື່ວິສາຫະກິດ ຫຼື ແຈ້ງຕອບປະຕິເສດ ໃຫ້ແກ່ຜູ້ສະເໜີຢ່າງເປັນທາງການ ພາຍໃນ 01 ວັນລັດຖະການ.

## 1.5 <u>ການແຈ້ງຂຶ້ນທະບຽນວິສາຫະກິດ</u>

### ກ. <u>ການຮັບເອກະສານແລະການກຳນົດເນື້ອໃນໃສ່ໃບທະບຽນວິສາຫະກິດ</u>

**+ <u>ການຮັບແຈ້ງຂຶ້ນທະບຽນວິສາຫະກິດ</u>**

1. ຜູ້ທີ່ມີຈຸດປະສົງຢາກແຈ້ງຂຶ້ນທະບຽນວິສາຫະກິດ ຕ້ອງປະກອບເອກະສານໃຫ້ຄົບຖ້ວນຕາມ ທີ່ໄດ້ກຳນົດໄວ້ໃນໃບແຈ້ງການເລກທີ 1989/ອຄ, ລົງວັນທີ 2 ພະຈິກ 2007 ຍື່ນຕໍ່ ບັນດາຫ້ອງການເຈົ້າໜ້າທີ່ທະບຽນວິສາຫະກິດ "ທຈທ" ໃນຂອບເຂດທົ່ວປະເທດ ໂດຍບໍ່ຜ່ານຂັ້ນ"ທຈທ"ແຂວງໃນກໍລະນີຢູ່ໃນຂັ້ນຄຸ້ມຄອງຂອງ "ທຈທ" ຂັ້ນສູນກາງ ຫຼື ບໍ່ຜ່ານ ຫ້ອງການອຸດສາຫະກຳແລະການຄ້າ ຂັ້ນເມືອງ ໃນກໍລະນີຢູ່ໃນຂັ້ນຄຸ້ມຄອງຂອງ "ທຈທ" ຂັ້ນທ້ອງຖິ່ນ ກໍໄດ້. ເອກະສານທີ່ປະກອບຕ້ອງຄົບຖ້ວນຕາມທີ່ໄດ້ກຳນົດໄວ້ໃນຂໍ້ 1.3 ເທິງນີ້.

ສຳລັບການກຳນົດປະເພດກິດຈະການດຳເນີນທຸລະກິດ ຢູ່ໃນ ຄຳຮ້ອງ,ສັນຍາ,ກົດລະບຽບ ໃຫ້ຖືກກັບລະຫັດເລກສາລະບານ ການຈັດແບ່ງຂະແໜງການອຸດສາຫະກຳມາດຕະຖານສາກົນ(ISIC),ຖ້າປະເພດກິດຈະການດຳເນີນທຸລະກິດໃດ ບໍ່ມີເລກລະຫັດ(ISIC),ແຕ່ຄ້າຍຄື (ISIC)ໃດໜຶ່ງ ໃຫ້ອີງໃສ່ເລກລະຫັດ (ISIC) ນັ້ນເປັນພື້ນຖານ, ແຕ່ຕ້ອງໄດ້ ລະບຸເນື້ອໃນການດຳເນີນທຸລະກິດເພີ້ມຕື່ມ ແລະ “ທຈທ” ຕ້ອງແນະນຳຜູ້ປະກອບການຕື່ມໃນດ້ານການກຳນົດ ປະເພດທຸລະ ກິດ ຕາມເລກລະຫັດ (ISIC) ນັ້ນຕື່ມ.

2. ເຈົ້າໜ້າທີ່ທະບຽນວິສາຫະກິດ ຂອງ “ທຈທ” ຮັບເອກະສານແຈ້ງຂຶ້ນທະບຽນວິສາຫະກິດ ແລະ ກວດເບິ່ງປະເພດກິດຈະການດຳເນີນທຸລະກິດ ດັ່ງນີ້ :

- ຖ້າການດຳເນີນທຸລະກິດບໍ່ຢູ່ໃນບັນຊີຄວບຄຸມ ຕ້ອງຂຶ້ນທະບຽນວິສາຫະກິດ ຕາມລະບຽບການ, ໂດຍບໍ່ຕ້ອງ ລົງໄປກວດກາເບິ່ງສະຖານທີ່ ແລະ ຕີມູນຄ່າການປະກອບທຶນຈົດທະບຽນ.ສຳລັບກິດຈະການທີ່ຢູ່ໃນການຄຸ້ມຄອງຂອງ “ທຈທ” ນະຄອນຫລວງວຽງຈັນ ຕ້ອງມີສະໂນດນຳສົ່ງຈາກ “ທຈທ” ຂັ້ນແຂວງບ່ອນທີ່ວິສາຫະກິດຕັ້ງຢູ່ .

-ຖ້າການດຳເນີນທຸລະກິດ ຢູ່ໃນບັນຊີປະເພດທຸລະກິດຄວບຄຸມ (ບັນຊີກໍ) ຕາມດຳລັດເລກທີ68/ນຍ, ລົງວັນທີ26/8/2008 ຕ້ອງເຮັດສະໂນດນຳສົ່ງຂໍຄຳເຫັນນຳຂະແໜງການກ່ຽວຂ້ອງໃນທັນໃດ.

**+ <u>ການກຳນົດເນື້ອໃນໃສ່ໃບທະບຽນວິສາຫະກິດ</u>**

1. ການແຈ້ງຂຶ້ນທະບຽນວິສາຫະກິດຂອງ ບຸກຄົນ ຫຼື ນິຕິບຸກຄົນ ມີສິດຂໍອະນຸຍາດດຳເນີນທຸລະກິດໄດ້ຫຼາຍຂະແໜງການ,ຖ້າມີສາຂາ ຫຼື ຮ້ານຈຳໜ່າຍສິນຄ້າຂອງວິສາຫະກິດ, ຕ້ອງລະບຸສະຖານທີ່ຕັ້ງ ຂອງສາຂາແລະຮ້ານຈຳໜ່າຍ ລົງໃສ່ໃນໃບທະບຽນວິສາຫະກິດ.

2.ກິດຈະການທີ່ອະນຸຍາດດຳເນີນທຸລະກິດ ໃຫ້ລະບຸເລກລະຫັດການຈັດແບ່ງອຸດສາຫະກຳມາດຕະຖານສາກົນ (ISIC), ກິດຈະການ ໜຶ່ງ ຫຼື ຫຼາຍກິດຈະການກໍໄດ້ ໃສ່ໃນໃບທະບຽນວິສາຫະກິດດຽວ ແລະ ບັນດາກິດຈະການ ທີ່ອະນຸຍາດດຳເນີນທຸລະກິດ ໃຫ້ລະບຸໃສ່ດ້ານຫຼັງຂອງໃບທະບຽນວິສາຫະກິດ.

**ຂ. <u>ກຳນົດເວລາການຂຶ້ນທະບຽນວິສາຫະກິດ</u> :**

ຫ້ອງການເຈົ້າໜ້າທີ່ທະບຽນວິສາຫະກິດ ຕ້ອງປະຕິບັດດັ່ງນີ້:

1.ຂຶ້ນທະບຽນວິສາຫະກິດ ໃຫ້ແກ່ລົງທຶນຂອງລັດ,ເອກະຊົນພາຍໃນ ປະເພດການດຳເນີນທຸລະກິດທີ່ບໍ່ຢູ່ໃນບັນຊີປະເພດທຸລະກິດ ຄວບຄຸມຢ່າງຊ້າບໍ່ໃຫ້ເກີນ 10 ວັນລັດຖະການ ;

2. ຂຶ້ນທະບຽນວິສາຫະກິດ ໃຫ້ແກ່ຜູ້ລົງທຶນຕ່າງປະເທດ ຢ່າງຊ້າບໍ່ໃຫ້ເກີນ02ວັນລັດຖະການ;

3. ຂຶ້ນທະບຽນວິສາຫະກິດ ໃຫ້ແກ່ປະເພດການດຳເນີນທຸລະກິດ ທີ່ຢູ່ໃນບັນຊີປະເພດທຸລະກິດຄວບຄຸມ(ບັນຊີກໍ) ພາຍຫຼັງໄດ້ຮັບຄຳຕອບເຫັນດີ ຢ່າງຊ້າບໍ່ໃຫ້ເກີນ 03ວັນລັດຖະການ;

4. ທຸກໆເອກະສານກ່ຽວກັບການແຈ້ງຂຶ້ນທະບຽນວິສາຫະກິດ ທີ່ຢູ່ໃນບັນຊີປະເພດທຸລະກິດຄວບຄຸມ ແລະ ຢູ່ໃນການຄຸ້ມຂອງຂອງ “ທຈທ” ຂັ້ນນະຄອນຫລວງວຽງຈັນ, “ທຈທ” ຂັ້ນແຂວງຕ້ອງເຮັດສະໂນດນຳສົ່ງຢ່າງຊ້າບໍ່ໃຫ້ເກີນ 03ວັນລັດຖະການ .

5. ແຈ້ງຕອບເປັນລາຍລັກອັກສອນກ່ຽວກັບເຫດຜົນການບໍ່ຂຶ້ນທະບຽນວິສາຫະກິດ ຊ້າສຸດບໍ່ໃຫ້ເກີນ 10ວັນລັດຖະການ (ໃນກໍລະນີທົ່ວໄປ) ແລະ 03ວັນ ລັດຖະການ ໃນກໍລະນີຂະແໜງການກ່ຽວຂ້ອງ ຕອບບໍ່ເຫັນດີ (ປະເພດທຸລະກິດ ຢູ່ໃນບັນຊີປະເພດທຸລະກິດຄວບຄຸມ).

6. "ທຈທ" ຂອງຂັ້ນແຂວງນຳສົ່ງເອກະສານແຈ້ງຂຶ້ນທະບຽນວິສາຫະກິດ ໃຫ້ແກ່ ຫ້ອງການອຸດສາຫະກຳແລະການຄ້າ ຂັ້ນເມືອງ ພາຍໃນກຳນົດຊ້າສຸດບໍ່ໃຫ້ເກີນ03ວັນລັດຖະການ.

7. ຜູ້ປະສານງານຂອງ "ທຈທ" ທີ່ປະຈຳຢູ່ຂັ້ນຫ້ອງການອຸດສາຫະກຳແລະການຄ້າເມືອງ ນຳສົ່ງເອກະສານໃຫ້ "ທຈທ" ຂັ້ນແຂວງ ພາຍໃນກຳນົດຊ້າສຸດບໍ່ໃຫ້ເກີນ 03ວັນລັດຖະການ.

**ຄ. <u>ການມອບໃບທະບຽນວິສາຫະກິດ</u>**

ພາຍຫຼັງສຳເລັດການຂຶ້ນທະບຽນວິສາຫະກິດແລ້ວ "ທຈທ" ມອບ, ແນະນຳການນຳໃຊ້ ໃບທະບຽນວິສາຫະກິດ ແລະ ສະໂນດນຳສົ່ງເອກະສານ ໃຫ້ຜູ້ມາແຈ້ງຂຶ້ນທະບຽນວິສາຫະກິດ ໄປພົວພັນນຳ ຂະແໜງການກ່ຽວຂ້ອງ ເພື່ອຂໍອະນຸຍາດຕ່າງໆຕາມລະບຽບການ ເຊັ່ນ :

1. ສົ່ງໃຫ້ກົມຫຼືຫ້ອງການສ່ວຍສາອາກອນຂັ້ນນະຄອນຫລວງ ຫຼື ຂັ້ນແຂວງ (ຂະແໜງການເງິນ) ເພື່ອອອກໃບທະບຽນອາກອນ ແລະ ລະຫັດທະບຽນວິສາຫະກິດ ຕ້ອງຕິດນຳເລກປະຈຳຕົວຜູ້ເສຍອາກອນຕິດຢູ່ນຳໃບທະບຽນອາກອນທຸກໆໃບເພື່ອໃຫ້ໄດ້ປະກອບເປັນເລກລະຫັດ(Code)ເອກະພາບ,ສ້າງເປັນຖານຂໍ້ມູນແຫ່ງຊາດ (National Database) ກ່ຽວກັບທະບຽນວິສຫະກິດ ແລະ ສາມາດເຊື່ອມຕໍ່ກັບບັນດາຂະແໜງການ.

2. ສົ່ງໃຫ້ຂະແໜງການທີ່ກ່ຽວຂ້ອງ ເພື່ອຄຸ້ມຄອງຕາມເງື່ອນໄຂດັ່ງນີ້ :

**+ <u>ການດຳເນີນທຸລະກິດ ທີ່ບໍ່ຢູ່ໃນບັນຊີປະເພດທຸລະກິດຄວບຄຸມ.</u>**

-ສາມາດເຄື່ອນໄຫວດຳເນີນທຸລະກິດຕາມປະເພດທຸລະກິດ ທີ່ໄດ້ລະບຸໄວ້ໃນໃບທະບຽນວິສາຫະກິດ (ບໍ່ຈຳເປັນຂໍໃບອະນຸຍາດດຳເນີນທຸລະກິດ).

- ນຳໃຊ້ໃບທະບຽນວິສາຫະກິດເພື່ອກະກຽມການດຳເນີນທຸລະກິດ ຈາກນັ້ນໃຫ້ປະຕິບັດຕາມລະບຽບການຂອງຂະແໜງການກ່ຽວຂ້ອງກຳນົດໄວ້.

ການເຄື່ອນໄຫວດຳເນີນທຸລະກິດ ໃຫ້ສອດຄ່ອງຕາມລະບຽບກົດໝາຍ ແລະ ນະໂຍບາຍສົ່ງເສີມ, ຄຸ້ມຄອງ, ຕິດຕາມ,ກວດກາ ຕ້ອງໄດ້ປະຕິບັດຕາມ ລະບຽບການຂອງຂະແໜງການກຳນົດໄວ້ .

**+ <u>ການດຳເນີນທຸລະກິດ ທີ່ຢູ່ໃນບັນຊີປະເພດທຸລະກິດຄວບຄຸມ (ບັນຊີ ກ)</u>** .

ພາຍຫລັງໄດ້ຮັບໃບທະບຽນວິສາຫະກິດແລ້ວ ຕ້ອງໄດ້ຂໍອະນຸຍາດດຳເນີນທຸລະກິດ ນຳຂະແໜງການກ່ຽວຂ້ອງຕາມລະບຽບການ.

3. ການແນະນຳກ່ຽວກັບການນຳໃຊ້ໃບທະບຽນວິສາຫະກິດ.

ພາຍຫຼັງຜູ້ປະກອບການທຸລະກິດໄດ້ຮັບອະນຸຍາດຂຶ້ນທະບຽນວິສາຫະກິດແລ້ວ,"ທຈທ" ທຸກຂັ້ນຕ້ອງໄດ້ອອກໃບແນະນຳ, ກຳນົດເວລາໃນການຂຶ້ນປ້າຍໃຫ້ສຳເລັດພາຍໃນ 20ວັນ, ໃຫ້ລາຍງານຜົນການນຳໃຊ້ໃບທະບຽນວິສາຫະກິດ ພາຍໃນ90ວັນ ແລະ ລາຍງານຜົນການເຄື່ອນໄຫວ ຫຼື ບໍ່ເຄື່ອນໄຫວ ພາຍໃນ12 ເດືອນ ນຳ "ທຈທ" ບ່ອນທີ່ຂຶ້ນທະບຽນວິສາຫະກິດ ເພື່ອຕິດຕາມສັງລວມສ້າງເປັນລະບົບໃນການຕິດຕາມການເຄື່ອນໄຫວດຳເນີນທຸລະກິດຂອງບັນດາຫົວໜ່ວຍວິສາຫະກິດ.

**ງ. <u>ການບັນທຶກ,ເກັບກຳ,ສັງລວມສະຖິຕິ</u>**

ເພື່ອຈັດຕັ້ງປະຕິບັດການເກັບກຳການຂຶ້ນທະບຽນວິສາຫະກິດ, ສັງລວມສະຖິຕິໃຫ້ເປັນລະບົບ ສອດຄ່ອງຕາມລະບຽບການ ແນໃສ່ສົ່ງເສີມ,ກວດກາ ແລະ ຕິດຕາມບັນດາຫົວໜ່ວຍວິສາຫະກິດ ໃຫ້ເປັນລະບົບຢ່າງຕໍ່ເນື່ອງ ໃຫ້ປະຕິບັດດັ່ງນີ້:

- ສ້າງປື້ມຕິດຕາມເອກະສານ ຂາເຂົ້າ-ຂາອອກ ສະເພາະ "ທຈທ" .

- ສ້າງປື້ມບັນທຶກຈົດເລກລຳດັບຂອງການຂຶ້ນທະບຽນວິສາຫະກິດ ຢ່າງຕໍ່ເນື່ອງແລະຈັດລຽງຕາມລຳດັບຂອງຫົວໜ່ວຍວິສາຫະກິດເປັນຫົວດຽວ .

- ເກັບກຳ, ສັງລວມ, ລາຍງານສະຖິຕິເປັນເດືອນແລະປີ (ຕາມປີສາກົນ) ເພື່ອລາຍງານໃຫ້ "ທຈທ" ນະຄອນຫລວງວຽງຈັນ ທີ່ຕັ້ງຢູ່ກະຊວງອຸດສາຫະກຳ ແລະ ການຄ້າ ເພື່ອສັງລວມເປັນຖານຂໍ້ມູນຫົວໜ່ວຍທຸລະກິດແຫ່ງຊາດ ໂດຍນຳໃຊ້ແບບຟອມເປັນເອກະພາບ ແລະ ຈັດສົ່ງລາຍງານເປັນປົກກະຕິ .

ສຳລັບ"ທຈທ"ແຂວງ ທີ່ມີຄວາມພ້ອມໃນການນຳໃຊ້ຄອມພິວເຕີ,ແມ່ນໃຫ້ເກັບຮັກສາຂໍ້ມູນໄວ້ໃນລະບົບຄອມພິວເຕີຕື່ມ ຫຼື ແຂວງໃດມີຄອມພິວເຕີທີ່ສາມາດຮອງຮັບໃນການຕິດຕັ້ງ,ນຳໃຊ້ຊອບແວຣ ກໍໃຫ້ຕິດຕັ້ງຊອບແວຣກ່ອນ ຈາກນັ້ນຈິ່ງສ້າງເງື່ອນໄຂຄວາມພ້ອມໃນການນຳໃຊ້ລະບົບເຊື່ອມຕໍ່ກັບສູນກາງ.

**ຈ. <u>ການເກັບກຳສຳເນົາເອກະສານຂຶ້ນທະບຽນວິສາຫະກິດ</u>**

ຫ້ອງການເຈົ້າໜ້າທີ່ທະບຽນວິສາຫະກິດ ຕ້ອງໄດ້ຈັດຕັ້ງລະບົບການເກັບຮັກສາ,ຄຸ້ມຄອງສຳນວນເອກະສານ ຂອງທຸກໆຫົວໜ່ວຍທຸລະກິດໄວ້ເປັນລະບົບ,ຈັດລຽງຕາມລຳດັບ, ເປັນ ແຕ່ລະຂະແໜງການ ຫຼື ລຽງ ຕາມອັກສອນ,ໃຫ້ມີຫ້ອງ ຫຼື ຕູ້ ເກັບມ້ຽນສະເພາະເພື່ອຄຸ້ມຄອງ , ຮັກສາປະຫວັດ ຂອງ ຫົວໜ່ວຍວິສາຫະກິດ ໄປຈົນກວ່າໝົດອາຍຸການເຄື່ອນໄຫວດຳເນີນທຸລະກິດຂອງວິສາຫະກິດກຳນົດໄວ້ ຫຼື ຕາມລະບຽບກົດໝາຍ, ແນໃສ່ກຽມພ້ອມ,ຕອບສະໜອງຂໍ້ມູນຂອງຫົວໜ່ວຍວິສາຫະກິດ ໃຫ້ແກ່ສາທາລະນະຊົນ .

## 1.6 <u>ການແບ່ງຂັ້ນຄຸ້ມຄອງການຂຶ້ນທະບຽນວິສາຫະກິດ</u>

ນອກຈາກໜ້າທີ່ ແລະ ຂອບເຂດສິດ ທີ່ໄດ້ກຳນົດໄວ້ໃນ ຂໍ້ຕົກລົງ ສະບັບເລກທີ 0225/ອຄ, ລົງວັນທີ 14/ 02/ 2005 ແລ້ວ, ຫ້ອງການເຈົ້າໜ້າທີ່ທະບຽນວິສາຫະກິດ "ທຈທ" ແຕ່ລະຂັ້ນຍັງມີໜ້າທີ່ດັ່ງນີ້:

**ກ. <u>ຂັ້ນສູນກາງ.</u>**

"ທຈທ" ທີ່ຕັ້ງຢູ່ ກະຊວງອຸດສາຫະກຳແລະການຄ້າ ແມ່ນລວມທັງ "ທຈທ" ຂອງຂັ້ນພະແນກອຸດສາຫະກຳແລະການຄ້ານະຄອນຫລວງວຽງຈັນ ມີໜ້າທີ່ ຂຶ້ນ ແລະ ດັດແກ້ທະບຽນວິສາຫະກິດ ໃຫ້ແກ່ :

1. ການສ້າງຕັ້ງບໍລິສັດລັດ ແລະ ບໍລິສັດປະສົມ ທີ່ຂັ້ນສູນກາງອະນຸມັດສ້າງຕັ້ງ(ຂັ້ນກະຊວງ,ອົງການທຽບເທົ່າກະຊວງແລະນະຄອນຫລວງ).

2. ການສ້າງຕັ້ງວິສາຫະກິດການລົງທຶນເອກະຊົນພາຍໃນ ເພື່ອດຳເນີນທຸລະກິດ ປະເພດທຸລະກິດດັ່ງນີ້:

- ປະເພດທຸລະກິດບໍ່ຢູ່ໃນບັນຊີຄວບຄຸມ ມີທີ່ຕັ້ງສຳນັກງານຢູ່ໃນຂອບເຂດນະຄອນຫລວງວຽງຈັນ.

- ປະເພດທຸລະກິດຢູ່ໃນບັນຊີຄວບຄຸມ ມີທີ່ຕັ້ງສຳນັກງານຢູ່ໃນຂອບເຂດນະຄອນຫລວງວຽງຈັນ, ຖ້າມີທີ່ຕັ້ງຢູ່ ແຂວງອື່ນ ໃຫ້ "ທຈທ" ຂັ້ນແຂວງນຳສົ່ງເອກະສານ ໃຫ້ "ທຈທ" ນະຄອນຫລວງວຽງຈັນ ເພື່ອສືບຕໍ່ຂໍຄຳ ເຫັນນຳຂະແໜງການກ່ຽວຂ້ອງ,ຖ້າເຫັນດີຈິ່ງຂຶ້ນທະບຽນວິສາຫະກິດ,ຖ້າບໍ່ເຫັນດີໃຫ້ແຈ້ງຕອບ ຢ່າງເປັນທາງການ).

3. ການສ້າງຕັ້ງວິສາຫະກິດການລົງທຶນຕ່າງປະເທດ ແລະ ຕ່າງປະເທດປະສົມພາຍໃນທີ່ມີໃບອະນຸຍາດ ລົງທຶນ ຂອງຂະແໜງແຜນການ ແລະ ການລົງທຶນ ຂັ້ນກະຊວງແລະຂັ້ນພະແນກ ຢູ່ນະຄອນຫລວງວຽງຈັນ.

4. ການສ້າງຕັ້ງວິສາຫະກິດການລົງທຶນຂອງລັດ, ເອກະຊົນພາຍໃນ,ຕ່າງປະເທດ ແລະ ຕ່າງປະເທດປະສົມ ພາຍໃນ ມີທີ່ຕັ້ງ ຢູ່ແຂວງ ອື່ນ,ແຕ່ມີກິດຈະການດຳເນີນທຸລະກິດປະເພດ :

- ໂຮງງານປຸງແຕ່ງເຄມີ,ຜະລິດຕະພັນເຄມີ ແລະ ການຜະລິດຢາປົວພະຍາດ,ໂຮງງານຜະລິດ ຫຼື ປະກອບພາຫະນະ ແລະ ເຄື່ອງໃຊ້ໄຟຟ້າທຸກປະເພດ .

- ການນຳເຂົ້າ: ນ້ຳມັນເຊື້ອໄຟ,ອາຍແກັສ, ຢາສູບ, ເຫຼົ້າ, ແລະ ເຄື່ອງດື່ມທີ່ມີທາດເຫຼົ້າ,ພາຫະນະທຸກໆປະເພດ (ຍົກເວັ້ນພາຫະນະຮັບໃຊ້ດ້ານການຜະລິດກະສິກຳ) .

- ການສົ່ງອອກ: ສິນຄ້າປະເພດໄມ້, ຜະລິດຕະພັນໄມ້ທຸກປະເພດ.

- ການ ສຳຫລວດ, ຂຸດຄົ້ນ ແລະ ປຸງແຕ່ງແຮ່ທາດ ທຸກຊະນິດ .

- ແລະ ການດຳເນີນທຸລະກິດທີ່ຂະແໜງການກ່ຽວຂ້ອງ ຂັ້ນສູນກາງ (ກະຊວງ ຫຼື ທຽບເທົ່າ ກະຊວງ) ອະນຸຍາດດຳເນີນທຸລະກິດ.

5. ການລົງທຶນຂອງລັດ, ເອກະຊົນພາຍໃນ, ຕ່າງປະເທດ ແລະ ຕ່າງປະເທດປະສົມພາຍໃນ ມີທີ່ຕັ້ງຢູ່ແຂວງ ອື່ນ ແລະ ຢູ່ໃນການຄຸ້ມຄອງການຂຶ້ນທະບຽນວິສາຫະກິດ ຂອງ “ທຈທ” ຂັ້ນແຂວງ, ແຕ່ມີຈຸດປະສົງຢາກແຈ້ງຂຶ້ນທະບຽນວິສາຫະກິດຢູ່ “ທຈທ” ຂັ້ນນະຄອນຫລວງ.

6. ອອກໃບອະນຸມັດຈອງຊື່,ໃບຮັບຮອງຊື່ແລະໃບແຈ້ງຕອບປະຕິເສດ ການຈ່ອງຊື່ວິສາຫະກິດ.

7. ຈັດພິມຮ່າງແບບຟອມທະບຽນໃບທະບຽນ,ຈັດພິມ ຈຳໜ່າຍແບບຟອມ,ເກັບ,ຄຸ້ມຄອງ ແລະ ນຳໃຊ້ເງິນຄ່າແບບຟອມແຈ້ງຂຶ້ນທະບຽນວິສາຫະກິດ ຕາມທີ່ໄດ້ກຳນົດໄວ້ໃນແຈ້ງການສະບັບເລກທີ1989/ອຄ, ລົງວັນທີ 2 ພະຈິກ 2007 ແລະ ເກັບກຳ, ຄຸ້ມຄອງ ແລະ ນຳໃຊ້ເງິນ ທີ່ໄດ້ຈາກການປະຕິບັດມາດຕະການຕໍ່ຫົວໜ່ວຍທຸລະກິດ ຕາມຂໍ້ທີ ( III ).

8. ສູນລວມຖານຂໍ້ມູນຫົວໜ່ວຍທຸລະກິດແຫ່ງຊາດ (National Database).

ສ່ວນພະແນກອຸດສາຫະກຳ ແລະ ການຄ້ານະຄອນຫລວງ ນອກຈາກພາລະບົດບາດ,ສິດແລະໜ້າທີ່ໄດ້ກຳນົດໄວ້ແລ້ວ ຍັງມີໜ້າທີ່ຄຸ້ມຄອງ,ສົ່ງເສີມ,ຕິດຕາມ ແລະ ຊຸກຍູ້ ໃນການຈັດຕັ້ງປະຕິບັດ ກົດໝາຍວ່າດ້ວຍວິສາຫະກິດ ແລະ ລະບຽບ ການກ່ຽວຂ້ອງໃນການສ້າງຕັ້ງ ແລະ ເຄື່ອນໄຫວຂອງວິສາຫະກິດ .

**ຂ. <u>ຂັ້ນ ແຂວງ</u>.**

ຫ້ອງການເຈົ້າໜ້າທີ່ທະບຽນວິສາຫະກິດ “ທຈທ” ຂັ້ນແຂວງ ໃນຂອບເຂດທົ່ວປະເທດ ມີໜ້າທີ່ ຂຶ້ນ ແລະ ດັດແກ້ທະບຽນວິສາຫະກິດ ໃຫ້ແກ່ :

1. ການສ້າງຕັ້ງວິສາຫະກິດການລົງທຶນຂອງ ລັດ ແລະ ລັດປະສົມ ທີ່ຂັ້ນທ້ອງຖິ່ນອະນຸມັດສ້າງຕັ້ງ.

2. ການສ້າງຕັ້ງວິສາຫະກິດການລົງທຶນພາຍໃນ ແລະ ຕ່າງປະເທດ ທີ່ກິດຈະການດຳເນີນທຸລະກິດບໍ່ຢູ່ໃນການຄຸ້ມຄອງຂອງ “ທຈທ” ຂັ້ນນະຄອນຫລວງວຽງຈັນ ( ຂໍ້ ກ ຂອງຂໍ້1.6 ).

3. ຂຶ້ນ ແລະ ດັດແກ້ທະບຽນວິສາຫະກິດ ສ່ວນບຸກຄົນ ທີ່ມີການເຄື່ອນໄຫວດຳເນີນທຸລະກິດການຄ້າຂາຍຍ່ອຍ,ການຜະລິດ,ປຸງແຕ່ງ,ການບໍລິການ ແລະ ກິດຈະການອື່ນໆ ທີ່ຢູ່ໃນການຄຸ້ມຄອງ ຂອງຂະແໜງກ່ຽວຂ້ອງກັບການດຳເນີນທຸລະກິດ ຢູ່ຂັ້ນເມືອງ .

4.ສົ່ງເສີມ,ຄຸ້ມຄອງ,ຕິດຕາມການເຄື່ອນໄຫວດຳເນີນທຸລະກິດ ຂອງບັນດາຫົວໜ່ວຍທຸລະກິດ ທີ່ "ຫຈທ" ຂັ້ນນະຄອນ ຫລວງ ອອກໃບທະບຽນວິສາຫະກິດ,ອອກໃບຢັ້ງຢືນສາຂາ ແລະ ຫົວໜ່ວຍວິສາຫະກິດ ທີ່ມີການເຄື່ອນໄຫວຢູ່ພາຍໃນແຂວງ.

5.ອອກໃບຮັບຮອງຊື່ ແລະ ໃບແຈ້ງຕອບປະຕິເສດ ການຈ່ອງຊື່ວິສາຫະກິດ ພາຍຫຼັງທີ່ໄດ້ ຮັບການແຈ້ງຕອບຈາກ " ຫຈທ " ຂັ້ນນະຄອນຫລວງວຽງຈັນ.

6. ຈັດພິມແບບຟອມແຈ້ງຂຶ້ນທະບຽນວິສາຫະກິດ,ຈຳໜ່າຍ,ເກັບ ແລະ ນຳໃຊ້ເງິນຄ່າແບບຟອມ ຕາມທີ່ໄດ້ກຳນົດໄວ້ໃນ ແຈ້ງການສະບັບເລກທີ 1989/ອຄ, ລົງວັນທີ 2 ພະຈິກ 2007.

7.ເກັບກຳສັງລວມສະຖິຕິການຂຶ້ນທະບຽນວິສາຫະກິດ ແລະ ນຳສົ່ງໃຫ້ "ຫຈທ"ນະຄອນຫລວງ ເພື່ອເອົາເຂົ້າ ໃນຖານຂໍ້ມູນຫົວໜ່ວຍທຸລະກິດແຫ່ງຊາດ (National Database).

ຄ. <u>ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ</u>

ນອກຈາກພາລະບົດບາດສິດແລະໜ້າ ຂອງບັນດາຫ້ອງການອຸດສາຫະກຳແລະການຄ້າ ຂັ້ນເມືອງ ຮັບຜິດຊອບແລ້ວ ຍັງມີໜ້າທີ່ຄຸ້ມຄອງ,ສົ່ງເສີມ,ຕິດຕາມ ແລະ ຊຸກຍູ້ ໃນການຈັດຕັ້ງປະຕິບັດ ກົດໝາຍວ່າດ້ວຍວິສາຫະກິດ ແລະ ລະບຽບ ການກ່ຽວຂ້ອງໃນການສ້າງຕັ້ງ ແລະ ເຄື່ອນໄຫວຂອງວິສາຫະກິດ ດັ່ງນີ້ :

1.ບໍລິການ ຮັບ ແລະ ນຳສົ່ງເອກະສານແຈ້ງຂຶ້ນທະບຽນວິສາຫະກິດ ໃຫ້ "ຫຈທ" ນະຄອນຫລວງ ວຽງຈັນ ຫຼື ແຂວງ ບ່ອນທີ່ວິສາຫະກິດຕັ້ງຢູ່ .

2. ແນະນຳກ່ຽວກັບການນຳໃຊ້ ຊຸດແບບຟອມແຈ້ງຂຶ້ນທະບຽນວິສາຫະກິດ ໃຫ້ແກ່ຜູ້ມາແຈ້ງຂຶ້ນທະບຽນວິສາຫະກິດ .

3. ຕິດຕາມການເຄື່ອນໄຫວດຳເນີນທຸລະກິດ ຂອງບັນດາຫົວໜ່ວຍທຸລະກິດ ທີ່ຕັ້ງຢູ່ຂອບເຂດການຄຸ້ມຄອງຂອງເມືອງຮັບຜິດຊອບ ເຊັ່ນ : ການນຳໃຊ້ທະບຽນວິສາຫະກິດ, ການຂຶ້ນປ້າຍ, ການນຳໃຊ້ຊື່, ການດຳເນີນທຸລະກິດ, ສະຖານທີ່ ແລະ ສະພາບແວດລ້ອມທີ່ກ່ຽວຂ້ອງກັບທຸລະກິດ .

ໃນກໍລະນີເຫັນວ່າການເຄື່ອນໄຫວດຳເນີນທຸລະກິດ ບໍ່ສອດຄ່ອງຕາມລະບຽບການກຳນົດໄວ້ ຕ້ອງແນະນຳ, ຕັກເຕືອນ ພ້ອມລາຍງານໃຫ້ "ຫຈທ" ຂັ້ນແຂວງ ຫຼື ຂັ້ນທີ່ ອອກທະບຽນວິສາຫະກິດ ເພື່ອປະຕິບັດຕາມລະບຽບການກຳນົດ.

4. ຈັດພິມ,ຈຳໜ່າຍ, ເກັບ ແລະ ນຳໃຊ້ເງິນ ຄ່າແບບຟອມແຈ້ງຂຶ້ນທະບຽນວິສາຫະກິດ.

## II./ <u>ການດັດແກ້ທະບຽນວິສາຫະກິດ ຂອງບັນດາຫົວໜ່ວຍທຸລະກິດທີ່ໄດ້ຂຶ້ນທະບຽນວິສາຫະກິດ ຕາມກົດໝາຍວ່າດ້ວຍທຸລະກິດໃຫ້ປະຕິບັດດັ່ງນີ້</u> :

ບັນດາຫົວໜ່ວຍທຸລະກິດ ທີ່ໄດ້ຂຶ້ນທະບຽນວິສາຫະກິດ ຕາມກົດໝາຍວ່າດ້ວຍທຸລະກິດ ໃຫ້ມາດັດແກ້,ປ່ຽນແປງ ໃບທະບຽນວິສາຫະກິດ ໃຫ້ສອດຄ່ອງຕາມກົດໝາຍວ່າດວ້ຍວິສາຫະກິດ ເຊັ່ນ : ປັບປຸງໂຄງປະກອບຂອງທຸລະກິດຄືນໃໝ່ ໃຫ້ສອດຄ່ອງຕາມ ປະເພດ,ຮູບການ ແລະ ຮູບແບບ ຂອງວິສາຫະກິດ ຫຼື ບໍລິສັດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍວິສາຫະກິດ ແລະ ພິວພັນເອົາແບບຟອມ,ປະກອບຄຳຮ້ອງແຈ້ງຂຶ້ນທະບຽນວິສາຫະກິດໃໝ່ ຕາມທີ່ໄດ້ກຳນົດໄວ້ ໃນຂໍ້ 1.3 ແລະ 1.4 ເທິງນີ້ .

ການຈັດຕັ້ງປະຕິບັດ ໃຫ້ແບ່ງອອກເປັນ 2 ໄລຍະ ດັ່ງນີ້ :

+ <u>ໄລຍະທີ 1</u> :

ເປີດຮັບການແຈ້ງດັດແກ້ທະບຽນວິສາຫະກິດ ຂອງຫົວໜ່ວຍທຸລະກິດທີ່ຂັ້ນກະຊວງ ແລະ ຂັ້ນພະແນກອຸດສາຫະກຳ ແລະ ການຄ້າແຂວງ ອອກໃບທະບຽນວິສາຫະກິດໃນເມື່ອກ່ອນ.

+ ໄລຍະທີ 2 :

ເປີດຮັບການແຈ້ງດັດແກ້ທະບຽນວິສາຫະກິດ ຂອງຫົວໜ່ວຍທຸລະກິດ ທີ່ຫ້ອງການ ອຸດສາຫະກຳ ແລະ ການຄ້າ ຂັ້ນເມືອງ ອອກໃບທະບຽນວິສາຫະກິດໃນເມື່ອກ່ອນ.

ການຈັດຕັ້ງປະຕິບັດ ໃຫ້ເຮັດເປັນແຕ່ລະເມືອງ,ຖ້າເມືອງໃດສຳເລັດ,ຈິ່ງສືບຕໍ່ ເມືອງອື່ນຕາມລຳດັບ.ສ່ວນເມືອງທີ່ຍັງລໍຖ້າຮັບການບໍລິການແຈ້ງຂຶ້ນທະບຽນວິສາຫະກິດ ແມ່ນໃຫ້ສືບຕໍ່ນຳໃຊ້ ໃບທະບຽນວິສາຫະກິດທີ່ມີແລ້ວ ໄປຈົນກວ່າມີການດັດແກ້ ແລະ ແຈ້ງໃຫ້ຂະແໜງການກ່ຽວຂ້ອງຮັບຊາບ.

## III./ ການປະຕິບັດນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ.

ອີງການຈັດຕັ້ງທີ່ກ່ຽວຂ້ອງກັບການຈັດຕັ້ງປະຕິບັດ ແລະ ເຄື່ອນໄຫວບໍ່ສອດຄ່ອງຕາມລະບຽບກົດໝາຍ ໃຫ້ປະຕິບັດ ດັ່ງນີ້ :

1. ບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃຫ້ປະຕິບັດ ຕາມ ມາດຕາ 232 ຫຼື ລະເມີດລະບຽບກົດໝາຍ ໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນມາດຕາ:230,233,234,235,238 ແລະ 243 ຂອງກົດໝາຍວ່າດ້ວຍວິສາຫະກິດ ແລະ ລະບຽບການທີ່ກ່ຽວຂ້ອງ.

2. ຖ້າບຸກຄົນ, ນິຕິບຸກຄົນ,ຫົວໜ່ວຍທຸລະກິດ ເຄື່ອນໄຫວບໍ່ຖືກຕ້ອງຕາມລະບຽບ,ກົດໝາຍ ໃຫ້ປະຕິບັດ ຕາມມາດຕາ:236,237,238,240,241ແລະ243 ຂອງກົດໝາຍວ່າດ້ວຍວິສາຫະກິດ.

3. ຖ້າຫົວໜ່ວຍວິສາຫະກິດໃດ ບໍ່ເຄື່ອນໄຫວດຳເນີນທຸລະກິດ,ບໍ່ມາລາຍງານຜົນການເຄື່ອນໄຫວດຳເນີນທຸລະກິດ ຫຼື ເຄື່ອນໄຫວແຕ່ບໍ່ປະຕິບັດພັນທະດ້ານພາສີ,ອາກອນ ເປັນເວລາ12ເດືອນຕິດຕໍ່ກັນ ໃຫ້ປະຕິບັດຕາມ ມາຕາ17 ຂອງກົດໝາຍວ່າດ້ວຍວິສາຫະກິດ.

4. ໃນກໍລະນີທີ່ການລະເມີດ ຫາກເປັນການກະທຳຜິດທາງອາຍາ ຜູ້ລະເມີດຈະຖືກລົງໂທດ ຕາມກົດໝາຍອາຍາ ແລະ ລະບຽບການທີ່ກ່ຽວຂ້ອງ.

## IV./ ການສົ່ງເສີມພັດທະນາຫົວໜ່ວຍທຸລະກິດ

ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດ ສົ່ງເສີມ,ຕິດຕາມ ແລະ ກະຕຸກຊຸກຍູ້ ໃຫ້ບັນດາຫົວໜ່ວຍວິສາຫະກິດ ທີ່ໄດ້ຂຶ້ນທະບຽນວິສາຫະກິດແລ້ວ ໃຫ້ໄດ້ມີການພັດທະນາ ແລະ ເຄື່ອນໄຫວສອດຄ່ອງຕາມລະບຽບກົດໝາຍ ໃຫ້ເອົາໃຈໃສ່ບັນດາເງື່ອນໄຂດັ່ງນີ້:

- ການນຳໃຊ້ໃບທະບຽນວິສາຫະກິດ ;
- ການຂຶ້ນປ້າຍ,ການໃສ່ຊື່ວິສາຫະກິດ ;
- ການປະຕິບັດພັນທະດ້ານ ພາສີ-ອາກອນ ປະຈຳປີ;
- ການປະຕິບັດບັນດາລະບຽບການດຳເນີນທຸລະກິດ ທີ່ຢູ່ໃນການຄຸ້ມຄອງຂອງຂະແໜງການ ກ່ຽວຂ້ອງ ອື່ນໆ ເພື່ອປະສານພົວພັນຊຸກຍູ້ສົ່ງເສີມໃຫ້ຫົວໜ່ວຍທຸລະກິດໄດ້ເຄື່ອນໄຫວຢ່າງເຕັມສ່ວນ.

## V. / ການອະນຸມັດເຊັນໃບທະບຽນວິສາຫະກິດ

ຜູ້ທີ່ມີສິດເຊັນໃບທະບຽນວິສາຫະກິດ ແລະ ນຳໃຊ້ກາປະທັບຂອງ "ຫຈທ" ສະເພາະ ປະກອບດ້ວຍ :

1. ຂັ້ນສູນກາງ: ແມ່ນຄະນະກົມການຄ້າພາຍໃນ ຜູ້ຊີ້ນຳຫ້ອງການເຈົ້າໜ້າທີ່ທະບຽນວິສາຫະກິດ ເຊັນອັນດັບທີ1. ຖັດລົງມາແມ່ນຫົວໜ້າຫ້ອງການເຈົ້າໜ້າທີ່ທະບຽນວິສາຫະກິດ ເປັນຜູ້ເຊັນອັນດັບທີ 2. ຖ້າຜູ້ມີສິດເຊັນອັນດັບທີ1ແລະທີ2 ບໍ່ຢູ່ ແມ່ນຜູ້ຖັດລົງມາຕາມລຳດັບຂອງຂັ້ນເຈົ້າໜ້າທີ່ທະບຽນວິສາຫະກິດ ມີສິດເຊັນໂດຍອັດຕະໂນມັດ ແລະ ທຸກຄົນຕ້ອງຮັບຜິດຊອບຮ່ວມກັນຕໍ່ການເຊັນ ແລະ ໃຫ້ລາຍງານ ຕາມລະບຽບການ .

2. ຂັ້ນທ້ອງຖິ່ນ: ແມ່ນຄະນະພະແນກ ອຸດສາຫະກຳແລະການຄ້າ ຜູ້ຊີ້ນຳວຽກງານທະບຽນວິສາຫະກິດເຊັນອັນດັບທີ1, ຫົວໜ້າຂະແໜງການຄ້າພາຍໃນ ເຊັນອັນດັບ2, ຫົວໜ້າຫ້ອງການເຈົ້າໜ້າທີ່ທະບຽນວິສາຫະກິດ ເຊັນອັນດັບທີ3. ຖ້າຜູ້ມີສິດເຊັນອັນດັບທີ1, 2 ແລະ ທີ3 ບໍ່ຢູ່ ແມ່ນຜູ້ຖັດລົງມາຕາມລຳດັບ ຂອງຂັ້ນເຈົ້າໜ້າທີ່ທະບຽນວິສາຫະກິດ ມີສິດເຊັນໂດຍອັດຕະໂນມັດ ແລະ ທຸກຄົນຕ້ອງຮັບຜິດຊອບຮ່ວມກັນຕໍ່ການເຊັນ ແລະ ໃຫ້ລາຍງານຕາມລະບຽບການ .

## VI./ <u>ການຈັດຕັ້ງປະຕິບັດ</u>

- ມອບໃຫ້ ກົມການຄ້າພາຍໃນ (ຫ້ອງການເຈົ້າໜ້າທີ່ທະບຽນວິສາຫະກິດ),ບັນດາພະແນກ ອຸດສາຫະກຳ ແລະ ການຄ້າ ແຂວງ,ຫ້ອງການອຸດສາຫະກຳແລະການຄ້າ ຂັ້ນເມືອງ ໃນຂອບເຂດທົ່ວປະເທດ ພ້ອມກັນ ຈັດຕັ້ງປະຕິບັດ ໃຫ້ໄດ້ຮັບປະສິດທິຜົນສູງ.
- ບັນດາຂະແໜງການທີ່ມີສ່ວນກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ໃຫ້ຄວາມຮ່ວມມືໃນການຈັດຕັ້ງປະຕິບັດ.
- ບັນດາ ບຸກຄົນ,ນິຕິບຸກຄົນ, ການຈັດຕັ້ງ ແລະ ຫົວໜ່ວຍທຸລະກິດ ທີ່ເປັນ ການລົງທຶນ ຂອງລັດ, ເອກະຊົນພາຍໃນ,ຕ່າງປະເທດ ແລະ ຕ່າງປະເທດປະສົມພາຍໃນ ຕ້ອງປະຕິບັດໃຫ້ສອດຄ່ອງຕາມ ຄຳແນະນຳ ສະບັບນີ້ ແລະ ລະບຽບກົດໝາຍທີ່ກ່ຽວຂ້ອງ ຢ່າງເຂັ້ມງວດ .
- ບັນດານິຕິກຳທີ່ກ່ຽວຂ້ອງກັບການຂຶ້ນທະບຽນວິສາຫະກິດ ຕາມກົດໝາຍວ່າດ້ວຍທຸລະກິດ ສະບັບເລກທີ 03/94/ສພຊ,ລົງວັນທີ18/7/94 ລ້ອນແຕ່ຖືກລົບລ້າງ.

ທ. ລັດຖະມົນຕີວ່າການ

ກະຊວງອຸດສາຫະກຳແລະການຄ້າ

ຊຽວສະຫວາດ ສະແຫວງສຶກສາ